ບໍລິສັດບໍລິການຄຸ້ມຄອງການຜະລິດແລະບຳລຸງຮັກສາອີດີແອວເຈັນຈຳກັດ

ຮັບສະໝັກເພື່ອຮ່ວມງານ

ບໍລິສັດ ບໍລິການ ຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ອີດີແອວເຈັນຈຳກັດ ຫຼື ບຄບ ຜ-ຟຟລ, ເປັນບໍລິສັດ ໜຶ່ງທີ່ແຍກຕົວອອກຈາ ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ ຫຼື EDL-Gen, ເພື່ອເຄື່ອນໄຫວທຸລະກິດ ກ່ຽວກັບວຽກ ງານ ການຄຸ້ມຄອງ ແລະ ບຳລຸງຮັກສາ ເຂື່ອນໄຟຟ້າຂອງ ຜ-ຟຟລ ແລະ ເຂື່ອນ IPP ອື່ນໆ ຢູ່ພາຍໃນ ແລະ ຕ່າງປະເທດ. ມີຄວາມມຸ້ງໝັ້ນ ໃນການເສີມສ້າງປະໂຫຍດ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການ ທາງ ດ້ານການດຳເນີນທຸລະກິດ ກ່ຽວກັບພະລັງງານໄຟຟ້າ, ປະຈຸບັນ ບໍລິສັດ ມີຫລາຍກວ່າ 05 ເຂື່ອນທີ່ໃຫ້ການບໍລິການ ວຽກງານຜະລິດພະລັງງານໄຟຟ້າ ໃນຂອບເຂດທົ່ວປະເທດ ແລະ ຍັງມີອີກຫລາຍເຂື່ອນທີ່ພວມຈະໄດ້ຮັບການຕອບຮັບ ໃນການບໍລິການ.

- ❖ ບຄບ ຜ-ຟຟລ ມີຄວາມຕ້ອງການ ຮັບສະໝັກພະນັກງານ ວິຊາການ ເພື່ອປະກອບເຂົ້າໃນ ວຽກງານ ຄຸ້ມຄອງ ແລະ ບຳລຸງຮັກສາ ເຂື່ອນໄຟຟ້າ ພະລັງງານນ້ຳ, ເຂື່ອນໄຟຟ້າຫ້ວຍລຳພັນ ຕອນລຸ່ມ ຊຶ່ງຕັ້ງຢູ່ ເມືອງ ລະມາມ ແຂວງ ເຊກອງ, ແລະ ເຂື່ອນໄຟຟ້າ ຕາດສະແລັນ ເມືອງ ເຊໂປນ ແຂວງສະຫວັນນະເຂດ ແລະ ມີລາຍລະອຽດດັ່ງນີ້:

1. **<u>ເຂື່ອນໄຟຟ້າຫ້ວຍລຳພັນຕອນລຸ່ມ:</u>**

   1.1 ຕຳແໜ່ງ ຄວບຄຸມການຜະລິດ ແລະ ບຳລຸງຮັກສາເຄື່ອງຈັກຈຳນວນ 08 ຕຳແໜ່ງ.

   - ເພດຊາຍ ອາຍຸ 20-30 ປີ, ເປັນຄົນສັນຊາດລາວ ແລະ ມີພູມລຳເນົາຢູ່ແຂວງ (ເຊກອງ, ສາລະ ວັນ, ຈຳປາສັກ ແລະ ອັດຕະປື)
   - ມີໃບປະກາດຈົບຊັ້ນກາງ-ຊັ້ນສູງ ໃນສາຂາວິຊາ ໄຟຟ້າ ຈຳນວນ 04 ຕຳແໜ່ງ
   - ມີໃບປະກາດຈົບຊັ້ນກາງ-ຊັ້ນສູງ ໃນສາຂາວິຊາ ກົນຈັກຈຳນວນ 04 ຕຳແໜ່ງ
   - ຮຽນຈົບຈາກພາຍໃນ ຫຼື ຕ່າງປະເທດ
   - ມີຄວາມຮູ້ທາງດ້ານພາສາຕ່າງປະເທດໃດໜຶ່ງທີ່ສາມາດ ອ່ານ, ຟັງ, ຂຽນ ເຂົ້າໃຈສັບເຕັກນິກ ອຸປະກອນຂອງເຂື່ອນ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປລາວ ຕູ້ ປນ 2392, ໂທລະສັບ: (856-21) 316758-59ອີເມລ: edlgenom@edlgen.com.la, ເວັບໄຊສ: www.edlgenom.com.la

- ມີຄວາມສາມາດໃນການນຳໃຊ້ຄອມພິວເຕີ Word, Excel, Power point andInternet network.

2. <u>ເຂື່ອນໄຟຟ້າຕາດສະແລັນ.</u>

2.1 ຕຳແໜ່ງ ຄວບຄຸມການຜະລິດ ແລະ ບຳລຸງຮັກສາເຄື່ອງຈັກຈຳນວນ 04 ຕຳແໜ່ງ.

- ເພດຊາຍ ອາຍຸ 20-30 ປີ, ເປັນຄົນສັນຊາດລາວ ແລະ ມີພູມລຳເນົາຢູ່ແຂວງ ສະຫວັນນະເຂດ.
- ມີໃບປະກາດຈົບຊັ້ນກາງ-ຊັ້ນສູງ ໃນສາຂາວິຊາ ໄຟຟ້າ ຈຳນວນ 02 ຕຳແໜ່ງ
- ມີໃບປະກາດຈົບຊັ້ນກາງ-ຊັ້ນສູງ ໃນສາຂາວິຊາ ກົນຈັກ ຈຳນວນ 02 ຕຳແໜ່ງ
- ຮຽນຈົບຈາກພາຍໃນ ຫຼື ຕ່າງປະເທດ
- ມີຄວາມຮູ້ທາງດ້ານພາສາຕ່າງປະເທດໃດໜຶ່ງທີ່ສາມາດ ອ່ານ, ຟັງ, ຂຽນ ເຂົ້າໃຈສັບເຕັກນິກ ອຸປະກອນຂອງເຂື່ອນ.
- ມີຄວາມສາມາດໃນການນຳໃຊ້ຄອມພິວເຕີ Word, Excel, Power pointandInternet network.

3. <u>ວິທີສະໝັກວຽກ:</u>

3.1 ເຂົ້າໄປທີ່ແວບໄຊ໌ ຂອງບໍລິສັດ ບຄບ ຜ-ຟຟລ www.edlgenom.com.la/ຮັບສະໝັກພະນັກງານ.

3.2 ຕື່ມຂໍ້ມູນຕາມແບບຟອມໃຫ້ຄົບຖ້ວນ ແລະ ກຽມສະແກນໃບຢັ້ງຢືນທີ່ຢູ່, ໃບປະກາດ ແລະ ໃບຄະແນນປະກອບໃສ່ພ້ອມ.

3.3 ເປີດຮັບສະໝັກທາງແວບໄຊ໌ຕະຫຼອດ 24 ຊົ່ວໂມງ ນັບແຕ່ວັນທີ 03-15/12/2019

3.4 ບຄບ ຜ-ຟຟລ ຈະກວດກາເອກະສານຕ່າງໆ ຂອງຜູ້ສະໝັກທີ່ປະກອບມາທາງແວບໄຊ໌, ຈາກນັ້ນ ຈະໄດ້ສັງລວມທັງໝົດ ຜູ້ທີ່ຜ່ານເງື່ອນໄຂ ແລະ ຈະແຈ້ງໃຫ້ຜູ້ສະໝັກຊາບຜ່ານຊ່ອງທາງແວບໄຊ໌ ຂອງ ບຄບ ຜ-ຟຟລ ແລະ ອີເມວຂອງແຕ່ລະຄົນເພື່ອຊາບ.

3.5 ຜູ້ໃດທີ່ຜ່ານເງື່ອນໄຂຄົບຖ້ວນ ທາງບໍລິສັດຈະໄດ້ແຈ້ງເຂົ້າສຳພາດ ທີ່ຫ້ອງການ ພາກສະໜາມ (ເຂື່ອນໄຟຟ້າຫ້ວຍລຳພັນຕອນລຸ່ມ ເມືອງລະມາມ ແຂວງ ເຊກອງ ແລະ ເຂື່ອນໄຟຟ້າຕາດສະແລັນ ເມືອງ ເຊໂປນ ແຂວງ ສະຫວັນນະເຂດ) ໃຫ້ຖືເອກະສານສະບັບຕົ້ນມາພ້ອມໃນວັນສຳພາດ.

4. <u>ຜູ້ທີ່ຜ່ານເງື່ອນໄຂການຄັດເລືອກເຂົ້າສຳພາດໃຫ້ປະກອບເອກະສານດັ່ງນີ້:</u>

4.1 ຟອມສະໝັກພະນັກງານຂອງ ບຄບ ຜ-ຟຟລ (ດາວໂຫລດໄດ້ທີ່ແວບໄຊ໌)

4.2 ຊີວະປະຫວັດເປັນເຜົ່າ 3-4 ໜ້າ (ຈົ່ງກາແດງຂອງບ້ານ ແລະ ບໍ່ເກີນ 3 ເດືອນ)

4.3 ຮູບຖ່າຍ 3x4 ຈຳນວນ03 ໃບ(ບໍ່ເກີນ 03 ເດືອນ)

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປລາວ ຕູ້ ປນ 2392, ໂທລະສັບ: (856-21) 316758-316759. ອີເມລ: edlgenhq@edlgen.com.la, ເວັບໄຊສ: www.edlgen.com.la

4.4 ສຳເນົາບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ປັສປໍ (1 ໃນ 3)

4.5 ສຳເນົາໃບປະກາດວິຊາສະເພາະ ແລະ ໃບຄະແນນ

4.6 ໃບຜ່ານງານ(ຖ້າມີ)

4.7 ໃບສຳເນົາໃບປະກາດ ມໍປາຍ

4.8 ໃບກວດສຸຂະພາບ (ກາແດງບໍ່ເກີນ 03 ເດືອນ)

4.9 ໃບຢັ້ງຢືນຄ້ຳປະກັນ (ກາແດງບໍ່ເກີນ 03 ເດືອນ)

4.10 ໃບແຈ້ງໂທດ (ກາແດງບໍ່ເກີນ 03 ເດືອນ)

4.11 ໃບຢັ້ງຢືນທີ່ຢູ່ (ກາແດງບໍ່ເກີນ 03 ເດືອນ)

5. <u>ສະຖານທີ ແລະ ວັນເວລາເຂົ້າປະຈຳການ:</u>

5.1 ເຂື່ອນໄຟຟ້າ ຫ້ວຍລຳພັນຕອນລຸ່ມ ເມືອງ ລະມາມ ແຂວງ ເຊກອງ ວັນທີ 6/1/2020

5.2 ເຂື່ອນໄຟຟ້າ ຕາດສະແລ້ນ ເມືອງ ເຊໂປນ ແຂວງ ສະຫວັນນະເຂດວັນທີ 6/1/2020

5.3 ລາຍລະອຽດເພີ່ມເຕີມ ກະລຸນາພ້ອມ ແລະ ສອບຖາມໄດ້ທີ່ພະແນກຈັດຕັ້ງ ບໍລິຫານ-ແຜນການ ໂທ: 021316758-59 ໃນໂມງລັດຖະການ.

ນະຄອນຫຼວງວຽງຈັນ, ວັນທີ...29..NOV..2019

<u>ຜູ້ອຳນວຍການໃຫຍ່ ບຄບ ຜ-ຟຟລ</u>

ວິວັນ ຈັນສະຫວັດ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປລາວ ຕູ້ ປນ 2392, ໂທລະສັບ: (856-21) 316758-59ອີເມລ: edlgenom@edlgen.com.la, ເວັບໄຊສ: www.edlgenom.com.la

ປະຕິທິນ ເພື່ອຮັບພະນັກງານໃໝ່ ປະຈຳປີ 2020 ຂອງ ບຄບ ຜ-ຟຟລ

ລຳດັບ	ໜ້າວຽກລະອຽດ	ໄລຍະເວລາ
1	ປະກາດຮັບສະໝັກ	03-15/12/2019
2	ຄັດເລືອກປະຫວັດ ແລະ ຂໍອະນຸມັດລາຍຊື່ຜູ້ສະມັກທີ່ຜ່ານ	16-17/12/2019
3	ແຈ້ງພວກກ່ຽວເພື່ອກະກຽມເຂົ້າສຳພາດຜ່ານເວັບໄຊ ແລະ ອີເມລ	18-20/12-/2019
4	ພວກກ່ຽວແຈ້ງຄືນການເຂົ້າຮ່ວມສຳພາດ	18-20/12-/2019
5	ສັງລວມຜູ້ຕອບຮັບທີ່ຈະເຂົ້າສຳພາດ	20-/12-/2019
6	ສຳພາດພະນັກງານທີ່ສະໝັກເຂົ້າເຮັດວຽກເຂື່ອນຕາດສະແລນ ທີ່ເມືອງ ເຊໂປນ ແລະ ພວກກ່ຽວປະກອບເອກະສານຄົບຖ້ວນມາຍື່ນ	23-24/12/2019
7	ສຳພາດພະນັກງານທີ່ສະໝັກເຂົ້າເຮັດວຽກເຂື່ອນຫ້ວຍລຳພັນຕອນລຸ່ມ ທີ່ເຂື່ອນຫ້ວຍລຳພັນໃຫຍ່ ແລະ ພວກກ່ຽວປະກອບເອກະສານຄົບ ຖ້ວນມາຍື່ນ	26-27/12/2019
8	ອອກຂໍ້ຕົກລົງ ແລະ ປະກາດລາຍຊື່ພະນັກງານໃໝ່	03-/01/2020
9	ພະນັກງານໃໝ່ ເຂົ້າປະຈຳການ ແລະ ເຊັນສັນຍາກັບພວກກ່ຽວ	06-/01/2020